# ໂຮງຮຽນວັນອາທິດ

**ວັນອາທິດທີ 30 ກໍຣະກະດາ 2017(07- 30- 2017)**

---

## ຄັດຄ້ານຕໍ່ການໃຊ້ອຳນາດ

ດົນປານໃດແລ້ວ ທີ່ທ່ານໄດ້ເຮັດບາງສິ່ງສຳເຣັດ ຊຶ່ງທ່ານຄິດວ່າທ່ານບໍ່ສາມາດເຮັດໄດ້?

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າຈະທຳງານຜ່ານຊີວິດພວກເຮົາ ເຖິງເຮົາຈະມີຄວາມບົກພ່ອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນຫ້ອງທຳງານຂອງຂ້າພະເຈົ້າເຕັມໄປດ້ວຍຮູບແຕ້ມສິລປະ, ຂ້າພະເຈົ້າກໍພາກພູມໃຈກັບການເກັບສະສົມຂອງຂ້າພະເຈົ້າ. ກ່ອນທ່ານຈະເລີ່ມເດົາວ່າຂ້າພະເຈົ້າໃຫ້ຄວາມສຳຄັນກັບສິ່ງນັ້ນຫຼືບໍ່ ຂໍ້ສຳຄັນ, ສມັຍໃໝ່, ຍຸກການຟື້ນຟູສິລປະ. ຫຼືແຜ່ນຫີນທີ່ແກະສລັກຂໍ້ພຣະຄັມພີທີ່ໜ້າຮັກ, ຂ້າພະເຈົ້າຈະແນະນຳທ່ານໜ້ອຍນຶ່ງ: ຂ້າພະເຈົ້າມີລູກນ້ອຍສາມຄົນ. ຮູບແຕ້ມ "ສິລປະ" ນັ້ນເຮັດໃຫ້ຝາຫ້ອງງົດງາມດ້ວຍການຮວບຮວມເອົາເສັ້ນທີ່ຂີດຊີກແຊັກ, ຕົວໜັງສື, ຮູບໝີແພນດ້າ, ແລະຮູບແຕ້ມຕົວຂອງທ່ານທີ່ເຫາະໄປກັບເສື້ອຄຸມ. ນັ້ນແມ່ນຄວາມແປກປລາດກ່ຽວກັບເດັກນ້ອຍ, ບໍ່ວ່າຮູບແຕ້ມຂອງເຂົາຈະເບິ່ງເປັນຢ່າງໃດຫຼືເສັ້ນທີ່ຂີດຈະຍາວຫຼາຍປານໃດ ພວກເຂົາກໍມີຄວາມປາບປື້ມໃຫ້ກັບການແຕ້ມຮູບຂອງເຂົາ. ( ແລະພໍ່ແມ່ຂອງເຂົາກໍເໝືອນກັນ.)

ເມື່ອໃດທີ່ພວກເຮົາເສັຽຄວາມພາກພູມໃຈໃນວຽກງານຂອງເຮົາ? ເມື່ອພວກເຮົາເລີ່ມສົມທຽບຕົວເຮົາໃສ່ກັບຄົນອື່ນ? ແທນທີ່ຈະພໍໃຈກັບສິ່ງທີ່ເຮົາສາມາດເຮັດໄດ້ສຳເຣັດ, ພວກເຮົາກັບມາເອົາມາຕະການຂອງຕົວພວກເຮົາເອງໄປສົມທຽບໃສ່ຂອງຄົນອື່ນແລະພວກເຮົາຟ້າວສລຸບເອົາວ່າເຮົາບໍ່ມີຄວາມສາມາດ.

ໃນຂະນະທີ່ວັທນະທັມອາດຈະໃຫ້ຄຸນຄ່າໃນຮູບຮ່າງຂອງເຮົາ, ຈຳນວນເງິນໃນບັນຊີທະນາຄານຂອງເຮົາ, ແລະຖ້ວຍລາງວັນແຂວນຢູ່ຝາຫ້ອງຂອງເຮົາ. ພຣະເຈົ້າຊົງທຳງານດ້ວຍມາດຕະຖານທີ່ແຕກຕ່າງ. ແທນທີ່ຈະໃຫ້ຄຸນຄ່າແກ່ເຮົາວ່າອັນໃດທີ່ເຮົາສາມາດເຮັດໄດ້ຫຼືບໍ່ສາມາດເຮັດໄດ້, ພຣະເຈົ້າຍອມຮັບເຮົາຕາມທີ່ເຮົາເປັນ. ດັ່ງທີ່ພວກເຮົາເຫັນໃນຊີວິດຂອງໂມເຊ, ພຣະເຈົ້າຮັບເອົາພວກເຮົາເໝືອນກັບພາຊະນະແຕກຫັກ ຖືກຕຳໜິແລະມີຄວາມອ່ອນແອ, ແລະພຣະອົງເຮັດໃຫ້ສຳເຣັດໃນສິ່ງທີ່ພວກເຮົາບໍ່ເຄີຍຄິດວ່າຈະເປັນໄປໄດ້.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

<u>**ສຶກສາພຣະຄັມພີ**</u>

**1. <u>ອົບພະຍົບ 3:11-12</u>:**

*[11]ຝ່າຍໂມເຊໄດ້ຂາບທູນພຣະເຈົ້າວ່າ, "ຂ້ານ້ອຍເປັນຄົນທັມມະດາ ຈະໄປເຝົ້າກະສັດຟາຣາໂອ ແລະນຳຊາວອິສຣາເອນອອກຈາກເອຢິບໄດ້ແນວໃດ?" [12]ພຣະອົງຊົງຕອບວ່າ, "ເຮົາຈະຢູ່ນຳເຈົ້າ ໝາຍສຳຄັນຕໍ່ໄປນີ້ຈະບອກໃຫ້ເຈົ້າຮູ້ວ່າແມ່ນເຮົາແທ້ໄດ້ສົ່ງເຈົ້າໄປ ຄືເມື່ອເຈົ້ານຳພາຊາວອິສຣາເອນອອກຈາກເອຢິບແລ້ວ ພວກເຈົ້າຈະໄດ້ຂາບໄຫວ້ເຮົາຢູ່ເທິງພູນີ້."*

ພວກເຮົາມີບັນຫາໃນອະດີດຜ່ານມາ, ແຕ່ໃຫ້ທ່ານນຶກເຖິງພາບການຖືກແຍກອອກຈາກແມ່ນຂອງເພິ່ນ ເມື່ອຍັງເປັນແອນ້ອຍຢູ່ເພາະຄວາມຕາຍໄດ້ເຂົ້າມາໃກ້ຄວບຄຸມຢູ່ເໜືອຊີວິດຂອງເພິ່ນ. ຄິດເບິ່ງວ່າຜູ້ໃຫ້ກຳເນີດຂອງເພິ່ນເປັນຜູ້ໃຫ້ນົມເພິ່ນກິນ, ແຕ່ຕໍ່ມາເພິ່ນກາຍເປັນລູກຂອງຍິງຄົນອື່ນຜູ້ທີ່ຮັບເພິ່ນມາລ້ຽງແລະດູແລເພິ່ນ, ຄິດເບິ່ງອີກວ່າເພິ່ນຍອມຮັບວ່າເປັນຊາຍໜຸ່ມຄາຕະກອນ, ຫຼັງຈາກນັ້ນກໍໜີໄປຕ່າງປະເທດແລະຍຶດເອົາວິທີທາງໃໝ່ໃນການດຳເນີນຊີວິດ

ນັ້ນແມ່ນເລື່ອງລາວຂອງໂມເຊ. ເຖິງແມ່ນວ່າລາວໄດ້ເຕີບໃຫຍ່ຂຶ້ນໃນຖານະຣາຊວົງຂອງອີຢິບ ເປັນລູກບຸນທຳຂອງລູກສາວກະສັດຟາຣາໂອ. ນັ້ນແມ່ນເວລາຊົ່ວຂະນະນຶ່ງທີ່ເກີດຂຶ້ນໃນອະດີດທີ່ຜ່ານມາຂອງລາວທີ່ເຮັດໃຫ້ລາວຕຶກຕ່ຳແລະສົງສັຍພຣະເຈົ້າ. ດັ່ງນັ້ນ, ເມື່ອພຣະເຈົ້າເອີ້ນໂມເຊໃຫ້ເປັນຜູ້ຮັບໃຊ້ຂອງພຣະອົງ ໃຫ້ເປັນຜູ້ນຳພາຊາວອິສຣາເອນ, ໂມເຊໄດ້ຄັດຄ້ານທັນທີ. ລາວຖາມວ່າ, " ຂ້ານ້ອຍເປັນຜູ້ໃດທີ່ຂ້ານ້ອຍຈະໄປຫາຟາຣາໂອແລະຈະນຳເອົາຊາວອິສຣາເອນອອກຈາກອີຢິບ?"

ໂມເຊອາດມີຄວາມຊົງຈຳໃນເວລານັ້ນເມື່ອເປັນເຈົ້າຊາຍໃນອີຢິບ, ລາວພະຍາຍາມຊ່ວຍຊາວອິສຣາເອນຈາກການຂົ່ມເຫັງໃຫ້ທຳງານໜັກໂດຍຊາວອີຢິບ. ລາວອາດຈະຄິດໃນໃຈວ່າ: ຖ້າຂ້ອຍບໍ່ສາມາດຊ່ວຍຄົນອິສຣາເອນແມ່ນແຕ່ຄົນດຽວເມື່ອຕອນທີ່ຂ້ອຍເປັນເຈົ້າຊາຍ, ຂ້ອຍຈະສາມາດນຳເອົາຊາວອິສຣາເອນອອກຈາກປະເທດອີຢິບໄດ້ຢ່າງໃດ? ບາງທີການຮຽກເອີ້ນຂອງພຣະເຈົ້າເຮັດໃຫ້ເກີດຄຳຖາມນັ້ນເຂົ້າມາໃນຄວາມຄິດຂອງໂມເຊ ກ່ອນໜ້ານີ້ 40 ປີ ລາວຍັງຈື່ໄດ້ດີ ວ່າ " ໃຜເປັນຜູ້ແຕ່ງຕັ້ງທ່ານແລະມາຕັດສິນພວກເຮົາ?"( ອົບພະຍົບ 2: 14 ).

ເປັນການງ່າຍສຳລັບພວກເຮົາທີ່ຈະຊອກຫາສາຍເຫດເພື່ອຄັດຄ້ານແລະໃຊ້ເຫດຜົນຕັດສິນ, ບໍ່ວ່າອັນໃດກໍຕາມແຕ່ພຣະເຈົ້າ…? ກ່ຽວກັບອັນໃດກໍຕາມ ແຕ່ພຣະເຈົ້າ…? ພຣະບິດາແຫ່ງຟ້າສວັນຂອງພວກເຮົາໃຫ້ຄຳຕອບຢ່າງດຽວກັນກັບທີ່ພຣະອົງໃຫ້ແກ່ໂມເຊ ເພື່ອຈະຊ່ວຍກຳຈັດຄວາມສົງສັຍຂອງລາວແລະຄວາມຄິດກົງກັນຂ້າມຂອງລາວ ທີ່ວ່າ: "ແນ່ນອນເຮົາຈະຢູ່ກັບເຈົ້າ."

## 2. <u>ອົບພະຍົບ 4:10-12</u>:

*10ຝ່າຍໂມເຊໄດ້ຂາບທູນພຣະຜູ້ເປັນເຈົ້າຕໍ່ໄປວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍເປັນຄົນເວົ້າບໍ່ເກັ່ງ ຄືໃນຄາວກ່ອນກໍດີ ຫລື ຕັ້ງແຕ່ເວລາທີ່ພຣະອົງຊົງກ່າວກັບຂ້ານ້ອຍແລ້ວກໍດີ ຂ້ານ້ອຍເປັນຄົນເວົ້າບໍ່ລ່ຽນໄຫລເລີຍ."11ພຣະຜູ້ເປັນເຈົ້າຊົງຖາມໂມເຊວ່າ, "ໃຜສ້າງປາກມະນຸດ? ໃຜເຮັດໃຫ້ເຂົາປາກກືກ ຫູໜວກ ຕາດີ ຫລື ຕາບອດ ບໍ່ແມ່ນເຮົາບໍ? 12ດ້ວຍເຫດນີ້ເຈົ້າຈົ່ງໄປເສັຽ ເຮົາຈະຊ່ວຍເຈົ້າເວົ້າ ແລະຈະບອກເຣື່ອງໃຫ້ເຈົ້າເວົ້າ.*

ໂມເຊໄດ້ອອກຈາກເງົາແຫ່ງອະດີດຂອງລາວ. ໃນຄວາມພະຍາຍາມຂອງລາວເອງ ແລະໃນວິທີທາງຂອງລາວເອງ, ໂມເຊໄດ້ພະຍາຍາມຊ່ວຍຊີວິດຊາວອິສຣາເອນຄົນນຶ່ງເມື່ອ 40 ປີກ່ອນ. ລາວໄດ້ຮັບຄວາມຜິດຫວັງ ເພາະສະນັ້ນ ລາວຮັບຮູ້ຈຸດບົກພ່ອງຂອງລາວເອງ.

ໜ້າເສັຽດາຍ, ໂມເຊປ່ອຍໃຫ້ຈຸດອ່ອນເຫຼົ່ານັ້ນ ຄວາມບາບທີ່ຜ່ານມາຂອງລາວແລະຄວາມເຂົ້າໃຈຕົວເອງຂອງລາວ ມີອິດທິພົນຕໍ່ອະນາຄົດຂອງລາວ. ວັນເດືອນປີຂອງການປົບໜີແລະການດຳລົງຊີວິດຢູ່ດ້ວຍຄວາມຢ້ານກົວເປັນຜົນສະທ້ອນຢ່າງຫຼວງຫຼາຍເໝືອນກັນ. ລາວໄດ້ຈົມລົງທາງຄວາມຄິດແລະຫາທາງອອກຈາກແຜນການຂອງພຣະເຈົ້າໃນຊີວິດຂອງລາວ.

ສຳລັບສິ່ງນີ້ແລະອີກເຫດຜົນອື່ນ, ໂມເຊບໍ່ໄດ້ເຫັນຕົວລາວເອງວ່າເປັນຄົນທີ່ເວົ້າເກັ່ງພໍທີ່ຈະເຮັດໃຫ້ຊາວອິສຣາເອນເຊື່ອຟັງ ແລະແນ່ນອນຈະບໍ່ເວົ້າຕໍ່ສູ້ກະສັດຟາຣາໂອ. ຄວາມຈິງ, ໂມເຊເບິ່ງຄືວ່າແນ່ໃຈວ່າລາວຈະບໍ່ສາມາດເວົ້າເຊັ່ນຜູ້ຊາຍທົ່ວໄປທີ່ເຂົາໄດ້ກະທຳ.

ທ່ານໄດ້ເຫັນຄຳເວົ້າປະຊິດປະຊັນຢູ່ທີ່ນີ້ບໍ? ໂມເຊໄດ້ສະແດງໃຫ້ເຫັນຄວາມຢ້ານກົວແລະການຂາດຄວາມສາມາດຂອງລາວທີ່ຈະເວົ້າຕໍ່ໜ້າຂອງຜູ້ມີອຳນາດສູງສຸດ, ຊຶ່ງເບິ່ງເໝືອນວ່າມີເຫດຜົນດີ, ຈົນບັດນີ້ໂມເຊຍັງໄດ້ສະແດງ

ຄວາມຢ້ານກົວນັ້ນຕໍ່ພຣະເຈົ້າຢູ່! ລາວກຳລັງເວົ້າກັບຜູ້ຊົງສ້າງໂລກຈັກກະວານ ແຕ່ປານນັ້ນລາວຍັງເວົ້າວ່າລາວຈະສາມາດເວົ້າຕໍ່ໜ້າຂອງຜູ້ມີອຳນາດຢ່າງໃດ.

ຈົ່ງໃຫ້ເຮົາສັດຊື່: ຖ້າທ່ານສາມາດເວົ້າກັບພຣະເຈົ້າ ແນ່ນອນທ່ານກໍສາມາດເວົ້າຕໍ່ກະສັດທຸກຄົນໃນໂລກ. ຂໍໃຫ້ເປັນຄຳຖາມທີ່ໜ້າສົນໃຈ: ໂມເຊສາມາດຕໍ່ລອງກັບພຣະເຈົ້າ ດ້ວຍເຫດໃດລາວຈຶ່ງຄິດວ່າລາວບໍ່ສາມາດຕໍ່ລອງກັບຟາຣາໂອ? ດ້ວຍເຫດໃດລາວຍັງຄົງຢືນການດື້ດຶງໃນຄວາມສົງສັຍຕົວຂອງລາວເອງ?

ບັນຫາແມ່ນໂມເຊຢຸດຢູ່ກັບການເບິ່ງແຕ່ຕົວເອງແລະບໍ່ໄດ້ເພັ່ງເບິ່ງຜູ້ທີ່ຮຽກເອີ້ນລາວ. ດ້ວຍເຫດນັ້ນພຣະເຈົ້າຈຶ່ງໄດ້ເຕືອນສະຕິໂມເຊໃຫ້ລາວຮູ້ວ່າ ຜູ້ໃດເປັນຜູ້ສ້າງລາວດັ່ງທີ່ລາວເປັນຢູ່ນີ້. ເປັນຄຳທີ່ກ່າຍມາຈາກ ຂໍ້ 11 ພຣະເຈົ້າຖາມໂມເຊວ່າ: " ເຈົ້າຄິດວ່າເຈົ້າເວົ້າຊ້າແລະລັ່ງເລໃຈບໍ, ແລະເຈົ້າບໍ່ເຄີຍມີວາທະສິນໃນການຕິດຕໍ່ສື່ສານ. ດີແລ້ວ, ເຈົ້າຄິດວ່າໃຜເປັນຜູ້ໃຫ້ເຈົ້າສາມາດເວົ້າໃນຕອນທຳອິດ? ຈົ່ງລຸກຢືນຂຶ້ນແລະໄປສາ!

ແມ່ນຫຍັງກໍຕາມທີ່ທ່ານອາດຈະເຫັນຈຸດອ່ອນ ແຕ່ບໍ່ເປັນຈຸດອ່ອນໃນພຣະທັດຂອງພຣະເຈົ້າ. ພຣະເຈົ້າຊົງສ້າງທ່ານດັ່ງທີ່ທ່ານເປັນຢູ່ນີ້, ແລະພຣະອົງຈະໃຊ້ທຸກສ່ວນໃນຊີວິດຂອງທ່ານເພື່ອສະງ່າຣາສີຂອງພຣະອົງ. ບໍ່ມີສິ່ງໃດຢູ່ເໜືອພຣະຄຸນແລະຣິດອຳນາດຂອງພຣະເຈົ້າ.

## 3. <u>ອົບພະຍົບ 4:13-17</u>:

*[13]ແຕ່ໂມເຊທູນຂໍອີກວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງສົ່ງຜູ້ອື່ນໄປສາ."[14]ພໍໂມເຊເວົ້າດັ່ງນີ້ ພຣະຜູ້ເປັນເຈົ້າກໍຊົງໂກດຮ້າຍ ໂດຍຊົງກ່າວວ່າ, "ອາໂຣນຄົນເລວີເປັນອ້າຍຂອງເຈົ້າແມ່ນບໍ? ເຮົາຮູ້ວ່າລາວເປັນຄົນເວົ້າເກັ່ງ ບັດນີ້ລາວກຳລັງຍ່າງມາພົບເຈົ້າ ລາວຈະດີໃຈຫລາຍທີ່ໄດ້ພົບເຈົ້າ.[15]ເຈົ້າຈົ່ງເວົ້າກັບລາວ ແລະບອກເຣື່ອງໃຫ້ລາວເວົ້າ ຝ່າຍເຮົາຈະຊ່ອຍພວກເຈົ້າເວົ້າ ກັບທັງຈະຊ່ອຍພວກເຈົ້າທັງສອງໃຫ້ຮູ້ວ່າ ຄວນຈະເຮັດແນວໃດ. [16]ອາໂຣນຈະເປັນຜູ້ເວົ້າກັບປະຊາຊົນແທນເຈົ້າ ລາວຈະເປັນໂຄສົກຂອງເຈົ້າ ເຈົ້າຈະເປັນເໝືອນພຣະເຈົ້າເພື່ອບອກສິ່ງທີ່ຄວນເວົ້າແກ່ລາວ.
[17]ເຈົ້າຈົ່ງຖືເອົາໄມ້ເທົ້ານີ້ ເພື່ອກະທຳການອັສຈັນເຫລົ່ານັ້ນ."*

ພຣະເຈົ້າບອກໂມເຊວ່າ, " ເຮົາຈະຊ່ວຍເຫຼືອເຈົ້າ"( ຂໍ້ 12 ) ຍິ່ງໄປກວ່ານັ້ນພຣະເຈົ້າອະທິບາຍເປັນຕອນໆ ເຖິງອະນາຄົດທີ່ຈະມາເຖິງໃນໄວໆນີ້, ເຮັດໃຫ້ໂມເຊເຫັນການອັສຈັນສາມຢ່າງເພື່ອຢືນຢັນວ່າພຣະເຈົ້າເປັນຜູ້ສົ່ງລາວໄປ. ແຕ່ໜ້າເສັຽດາຍ, ຂອງປະທານເຫຼົ່ານັ້ນບໍ່ເຮັດໃຫ້ໂມເຊໝັ້ນໃຈເລີຍ.

ແທນທີ່ຈະຕອບເໝືອນກັບເອຊາຢາຫລາຍສັຕວັດຕໍ່ມາ "ຂ້ານ້ອຍຢູ່ທີ່ນີ້, ໂຜດໃຊ້ຂ້ານ້ອຍເຖີດ" (ເອຊາຢາ 6:8 ) ໂມເຊທູນຕໍ່ພຣະເຈົ້າວ່າ, "ໂອອົງພຣະຜູເປັນເຈົ້າໂຜດກະຣຸນາສົ່ງຄົນອື່ນໄປເຖີດ," ບໍ່ເປັນເຣື່ອງແປກ "ພຣະຜູ້ເປັນເຈົ້າຊົງໂກດຮ້າຍຕໍ່ໂມເຊ"!

ໂມເຊຂາດຄວາມເຂົ້າໃຈວ່າພຣະເຈົ້າຊົງຈັດຫາທຸກສິ່ງທີ່ຕ້ອງການໃຫ້ແກ່ທຸກຄົນທີ່ພຣະອົງຊົງເອີ້ນ. ພຣະເຈົ້າບໍ່ພຽງແຕ່ເອີ້ນເທົ່ານັ້ນຕໍ່ຜູ້ທີ່ພຣະອົງຈັດຕຽມໄວ້ ແຕ່ເມື່ອພຣະເຈົ້າຊົງເອີ້ນເຮົາໃຫ້ມາຮັບໃຊ້ພຣະອົງ, ພຣະອົງຈະຈັດຕຽມທຸກສິ່ງທີ່ເຮົາຕ້ອງການໃນການຕິດຕາມພຣະອົງ, ການດຳລົງຊີວິດເພື່ອພຣະອົງທຸກວັນ, ແລະຈະມີປະສົບການກັບຄວາມຊື່ນຊົມຍິນດີຈາກພຣະອົງແລະຄວາມສົມບູນໃນຊີວິດຂອງເຮົາ.

ເປັນພຣະພອນສຳລັບໂມເຊ, ພຣະເຈົ້າຊົງມີຄວາມເມດຕາພຽງພໍ; ພຣະອົງຜ່ອນຜັນໃຫ້ແລະອະນຸຍາດໃຫ້ອາໂຣນ ອ້າຍຂອງໂມເຊໄປກັບລາວ, ແຕ່ພຣະເຈົ້າບໍ່ປ່ອຍໃຫ້ໂມເຊຫລີກລ້ຽງຈາກພັນທະກິດນີ້. ພຣະເຈົ້າບໍ່ໄດ້ຕັສວ່າ, "ເຮົາຈະໃຫ້ອາໂຣນເປັນຜູ້ເວົ້າແລະເຈົ້າພຽງແຕ່ເປັນຜູ້ບໍຣິຫານງານ" ແຕ່ພຣະເຈົ້າຊົງເວົ້າວ່າ, "ເຈົ້າຈະຕ້ອງເວົ້າກັບລາວແລະບອກລາວວ່າຈະເວົ້າຫຍັງ. ເຮົາຈະຊ່ວຍເຫຼືອເຈົ້າທັງສອງ ແລະເຮົາຈະສອນເຈົ້າທັງສອງວ່າຈະເຮັດຫຍັງ" ພຣະເຈົ້າຍັງຢືນຢັນວ່າໂມເຊຕ້ອງທຳງານນັ້ນທີ່ພຣະເຈົ້າໄດ້ເອີ້ນລາວໃຫ້ເຮັດ. ດ້ວຍເຫດໃດ? ເພາະພຣະເຈົ້າມີແຜນການທີ່ໃຫຍ່ກວ່າສິ່ງໃດໆ ຖ້າໂມເຊຫາກພ້ອມທີ່ຈະຍອມເຮັດຕາມ.

ເມື່ອຂ້າພະເຈົ້າຕື່ນນອນໃນຍາມເຊົ້າ, ກ່ອນສິ່ງອື່ນໃດໝົດຂ້າພະເຈົ້າຈະອະທິຖານ. ຂ້າພະເຈົ້າເລີ້ມຕົ້ນວັນໃໝ່ຂອງຂ້າພະເຈົ້າດ້ວຍການອະທິຖານ: " ອົງພຣະຜູ້ເປັນເຈົ້າ, ຂ້ານ້ອຍຢູ່ທີ່ນີ້. ຂ້ານ້ອຍຂໍໃຫ້ພຣະອົງຊົງໃຊ້ຂ້ານ້ອຍມື້ນີ້." ຂ້າພະເຈົ້າຕ້ອງການເປັນຜູ້ເຊື່ອທີ່ແທ້ຈິງ, ມີຄວາມຕັ້ງໃຈຈິງ, ແລະພ້ອມທີ່ຈະຮັບໃຊ້ພຣະເຈົ້າ. ຫຼັງຈາກຂ້າພະເຈົ້າອະທິຖານຂໍ້ຄວາມເຫຼົ່ານີ້, ຂ້າພະເຈົ້າກໍຕຽມພ້ອມທີ່ຈະໄປເຮັດວຽກ. ໃນຂະນະທີ່ຂ້າພະເຈົ້າພຳພ້ອມ ຂ້າພະເຈົ້າຈະສືບຕໍ່ອະທິຖານໂດຍກ່າວວ່າ, " ໂອພຣະເຈົ້າ, ໂຜດເວົ້າກັບຂ້ານ້ອຍແລະຕັສຜ່ານທາງຂ້ານ້ອຍມື້ນີ້ດ້ວຍເທີນ." ໃນທຸກການປະພຶດປະຕິບັດທີ່ຂ້ານ້ອຍມີຕໍ່ຄົນອື່ນ." ຂ້າພະເຈົ້າຕ້ອງການໃຫ້ກາຍເປັນຄຳເວົ້າທີ່ພຣະເຈົ້າເວົ້າຕໍ່ຂ້າພະເຈົ້າ ແລະຕັສຜ່ານທາງຂ້າພະເຈົ້າ. ດ້ວຍເຫດນີ້, ເມື່ອຂ້າພະເຈົ້າລົງທ້າຍການອະທິຖານ ຂ້າພະເຈົ້າຈະເວົ້າກັບພຣະເຈົ້າວ່າ, "ດັ່ງນັ້ນຂ້ານ້ອຍຂໍຖວາຍການງານທີ່ຂ້ານ້ອຍຈະເຮັດນີ້ໃຫ້ສຳເຣັດໃນພຣະອົງ, ການຮ່ວມປະຊຸມຂອງຂ້ານ້ອຍ, ການປະພຶດປະຕິບັດຕົວຂອງຂ້ານ້ອຍຕໍ່ເພື່ອນຮ່ວມງານ, ຈົນຕລອດຮອດເພື່ອນບ້ານ, ພັນລະຍາ, ແລະລູກໆ. ຂໍໂຜດຊົງນຳພາສິ່ງເຫລົ່ານີ້ດ້ວຍເທີນ ເພື່ອຂ້ານ້ອຍຈະໄດ້ຖວາຍເປັນພຣະກຽດແດ່ພຣະອົງ...ອາເມນ."

ນີ້ແມ່ນການຝຶກຝົນທີ່ມີປະສິດທິພາບສຳລັບຂ້າພະເຈົ້າ, ແລະຈະສາມາດເກີດຜົນສຳລັບທ່ານເຊັ່ນດຽວກັນ. ເລີ້ມຕົ້ນວັນໃໝ່ຂອງທ່ານດ້ວຍເຂົ້າໃຈວ່າພຣະເຈົ້າຈະຊົງສະຖິດຢູ່ກັບທ່ານ. ພຣະອົງຈະນຳພາທ່ານໃຫ້ສຳເຣັດພຣະປະສົງຂອງພຣະອົງຜ່ານທາງຊີວິດຂອງທ່ານ. ແລະພຣະອົງຈະຊົງທຳງານຜ່ານຊີວິດທ່ານ ເຖິງທ່ານຈະມີຄວາມບົກພ່ອງ.

## ນຳໃຊ້ໃນຊີວິດ.

**ທ່ານຈະສືບຕໍ່ຕອບສນອງການຊົງຮຽກເອີ້ນຂອງພຣະເຈົ້າຢ່າງໃດໃນຊີວິດຂອງທ່ານ? ຈົ່ງພິຈາຣະນາເບິ່ງຄຳແນະນຳນີ້ໃນແຕ່ລະວັນ.**

❖ **ຈັດການກັບອະດີດທີ່ຜ່ານມາ.** ຄວາມບາບທີ່ຜ່ານມາຂອງໂມເຊສິ່ງຜົນກະທົບທາງດ້ານຄວາມຄິດແລະທ່າທີຂອງລາວ. ການລໍ້ລວງອັນໃດທີ່ເຂົ້າມາລໍ້ລວງຊໍ້າແລ້ວຊໍ້າອີກໃນຕົວທ່ານ? ຄວາມບາບທີ່ທ່ານຍອມແພ້ໃຫ້ແກ່ມັນ? ອ້ອນວອນອະທິຖານຂໍໃຫ້ພຣະເຈົ້າປົດປ່ອຍທ່ານໃຫ້ຫລຸດຈາກໂສ້ເຫຼົ່ານັ້ນທີ່ຜູກມັດທ່ານຢູ່.

❖ **ສຸມໃຈໃສ່ປັດຈຸບັນ.** ເມື່ອທ່ານຕື່ນຂຶ້ນໃນທຸກໆເຊົ້າ, ເລີ້ມວັນໃໝ່ຂອງທ່ານໂດຍການຍອມຈຳນົນຕົວຂອງທ່ານເອງໃຫ້ແກ່ພຣະເຈົ້າແລະແຜນການຂອງພຣະອົງ.

❖ **ເປັນຜູ້ທີ່ຮັບຜິດຊອບ. ອີກ**ວິທີທາງນຶ່ງ ທີ່ເປັນວິທີທີ່ຈະເອົາຊະນະຄວາມບົກພ່ອງໄດ້ດີທີ່ສຸດ ແມ່ນການແບ່ງປັນເຣື່ອງຄວາມບົກພ່ອງນັ້ນກັບຄົນອື່ນແລະຂໍໃຫ້ຄົນອື່ນຊ່ວຍທ່ານໃຫ້ເປັນຄົນທີ່ຮັບຜິດຊອບ. ແທ້ຈິງແລ້ວ, ນີ້ແມ່ນກຸນແຈດອກນຶ່ງທີ່ເປັນຄຸນນະສົມບັດຂອງສາວົກຂອງພຣະຄຣິດ ສ້າງຄວາມສຳພັນກັບຄົນອື່ນແລະດຳລົງຊີວິດຢູ່ດ້ວຍບໍ່ມີຄວາມລະອາຍ. ຜູ້ໃດທີ່ທ່ານສາມາດຮ້ອງຂໍເພື່ອຊ່ວຍທ່ານໃຫ້ຮັກສາຄວາມຄວາມຮັບຜິດຊອບຂອງທ່ານ ໃນການເດີນໄປກັບພຣະຄຣິດ?

ທ່ານແລະຂ້າພະເຈົ້າມີຄວາມບົກພ່ອງ. ນັ້ນເປັນຄວາມຈິງ. ເຖິງແມ່ນວ່າ, ທ່ານແລະຂ້າພະເຈົ້າເປັນສະມາຊິກບຸກຄົນສຳຄັນໃນຣາຊອານາຈັກຂອງພຣະເຈົ້າ. ໃນແຕ່ລະວັນພວກເຮົາມີໂອກາດທຳງານໃຫ້ກັບພຣະອົງ ໃນຖານະພຣະອົງເປັນຜູ້ນຳພາແລະສິ່ງເສີມສນັບສນຸນພວກເຮົາໃຫ້ເຮັດດີຂຶ້ນໄປເລື້ອຍໆ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**